ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ເລກທີ 963/ຈຂ. ຈສ

ແຂວງຈຳປາສັກ, ວັນທີ 09 ຕຸລາ 2017

# ຂໍ້ຕົກລົງ

## ວ່າດ້ວຍການປະເມີນມູນຄ່າທີ່ດິນໃນຂອບເຂດ
## ເມືອງປາກເຊ, ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ ແລະ ເມືອງໂພນທອງ ແຂວງຈຳປາສັກ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ມະຕິຕົກລົງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີI ສະບັບເລກທີ 32/ສພຂ.ຈສ, ລົງວັນທີ 28 ກໍລະກົດ 2017;
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາປະຊາຊົນແຂວງຈຳປາສັກ ສະບັບເລກທີ 132/ສພຂ.ຈສ, ລົງວັນທີ 12 ກັນຍາ 2017;

## ເຈົ້າແຂວງໆຈຳປາສັກ ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1.ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການແລະມາດຕະການຕ່າງໆໃນການປະເມີນມູນຄ່າທີ່ດິນ ໃນ 4 ເມືອງຄື: ເມືອງປາກເຊ, ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ ແລະ ເມືອງໂພນທອງ ຂອງແຂວງຈຳປາສັກເພື່ອຕອບສະໜອງໃຫ້ແກ່ການພັດທະນາທີ່ດິນແຕ່ລະໄລຍະ, ຈັດຕັ້ງປະຕິບັດການຈົດທະບຽນທີ່ດິນ, ເກັບລາຍຮັບເຂົ້າງົບປະມານແຫ່ງລັດ.

### ມາດຕາ 2. ລະບົບການປະເມີນມູນຄ່າທີ່ດິນ

ການປະເມີນມູນຄ່າທີ່ດິນ ແມ່ນການຄາດຄະເນລາຄາທີ່ດິນ ຫຼື ການປະເມີນລາຄາທີ່ດິນ ໂດຍທຽບກັບເກນທີ່ຕັ້ງໄວ້ວ່າ ມີລາຄາສູງ-ຕໍ່າ ໃນລະດັບໃດ.

ລະບົບປະເມີນມູນຄ່າທີ່ດິນ ແມ່ນເປັນລະບົບໜຶ່ງທີ່ສຳຄັນ ເປັນວິທີເກັບກຳຂໍ້ມູນລາຄາຂາຍສິດນຳໃຊ້ທີ່ດິນຕົວຈິງເພື່ອເປັນພື້ນຖານໃນການຄິດໄລ່ຄ່າທຳນຽມຈົດທະບຽນກ່ຽວກັບທີ່ດິນຫຼືການໂອນສິດນຳໃຊ້ທີ່ດິນ.

ມາດຕາ 3. ອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. ສັນຍາລັກ $A_1 – A_8$ ໝາຍເຖິງເຂດປະເມີນທີ່ດິນ ຂອງບ້ານຕ່າງໆທີ່ຂຶ້ນກັບເມືອງປາກເຊ;

2. ສັນຍາລັກ$C_1 – C_8$ ໝາຍເຖິງເຂດປະເມີນທີ່ດິນ ຂອງບ້ານຕ່າງໆທີ່ຂຶ້ນກັບເມືອງບາຈຽງຈະເລີນສຸກ;

3. ສັນຍາລັກ $D_1 – D_8$ ໝາຍເຖິງເຂດປະເມີນທີ່ດິນ ຂອງບ້ານຕ່າງໆທີ່ຂຶ້ນກັບເມືອງປາກຊ່ອງ;

4. ສັນຍາລັກ$F_1 – F_8$ ໝາຍເຖິງເຂດປະເມີນທີ່ດິນ ຂອງບ້ານຕ່າງໆທີ່ຂຶ້ນກັບເມືອງໂພນທອງ;

5. ແຜນທີ່ເຂດປະເມີນມູນຄ່າທີ່ດິນ ໝາຍເຖິງພື້ນທີ່ເຊິ່ງກຳນົດໄວ້ ເພື່ອການປະເມີນມູນຄ່າສຳລັບຮັບໃຊ້ໃຫ້ແກ່ການຄິດໄລ່ຄ່າທຳນຽມຈົດທະບຽນມອບ - ໂອນສິດນຳໃຊ້ທີ່ດິນ, ແຜນທີ່ເຂດປະເມີນມູນຄ່າແຕ່ລະສະບັບກວມເອົາພື້ນທີ່ໃນຂອບເຂດຂອງແຕ່ລະເມືອງໃນ 4 ເມືອງຂອງແຂວງທີ່ໄດ້ມີການສຳຫຼວດແລະຖືກຈັດແບ່ງອອກເປັນຫຼາຍເຂດຍ່ອຍເອີ້ນວ່າ ( ເຂດປະເມີນມູນຄ່າທີ່ດິນ ) ແຜນທີ່ເຂດປະເມີນມູນຄ່າທີ່ດິນຂອງແຕ່ລະເມືອງຈະມີການກຳນົດລະຫັດເປັນຕົວອັກສອນລາຕິນ ( A B C .....) ຕາມເລກລະຫັດຂອງການປົກຄອງພາຍໃນແຂວງ;

6. ເຂດປະເມີນມູນຄ່າທີ່ດິນ ໝາຍເຖິງພື້ນທີ່ໃນແຜນທີ່ເຂດປະເມີນມູນຄ່າທີ່ດິນຂອງເມືອງ ຊຶ່ງໄດ້ຖືກຈັດແບ່ງອອກເປັນຫຼາຍເຂດຍ່ອຍ ໂດຍອີງຕາມ 4 ລັກສະນະພື້ນຖານຂອງພື້ນທີ່ຄື:

- ເຂດໃຈກາງຕົວເມືອງ ( ເຂດທຸລະກິດການຄ້າ, ເຂດສຳນັກງານອົງການ );
- ເຂດອ້ອມໃຈກາງຕົວເມືອງ ( ເຂດຊຸມຊົນ, ເຂດຂະຫຍາຍຕົວເມືອງ );
- ເຂດຊານເມືອງ ( ເຂດອຸດສະຫະກຳ, ເຂດທີ່ຢູ່ອາໄສ );
- ເຂດຊົນນະບົດ ( ເຂດທີ່ຢູ່ອາໄສ, ເຂດກະສິກຳ, ເຂດປ່າໄມ້ ).

7. ຕາຕະລາງອັດຕາຄິດໄລ່ສຳລັບທີ່ດິນ ໝາຍເຖິງອັດຕາຄິດໄລ່ທີ່ໄດ້ກຳນົດເຂົ້າໃນຕາຕະລາງ ສຳລັບທີ່ດິນໃນແຕ່ລະເຂດປະເມີນມູນຄ່າທີ່ດິນ ອັດຕາຄິດໄລ່ດັ່ງກ່າວແມ່ນກຳນົດຂຶ້ນບົນພື້ນຖານການເກັບກຳຂໍ້ມູນລາຄາປະກົດຕົວຂອງຕະຫລາດທີ່ດິນຕົວຈິງ ຊຶ່ງກຳນົດໃນ 4 ອົງປະກອບສຳຄັນຂອງທີ່ດິນ ( ທີ່ຕັ້ງ, ພື້ນຖານໂຄງລ່າງ , ການພັດທະນາ ແລະ ຄຸນນະພາບຂອງທີ່ດິນ ) ເຂົ້າໃນການປະເມີນມູນຄ່າທີ່ດິນ, ຈາກນັ້ນຈຶ່ງວິເຄາະ, ວິໃຈຂໍ້ມູນກ່ຽວກັບມູນຄ່າທີ່ດິນໃນແຕ່ລະເຂດເພື່ອຊອກຫາມູນຄ່າສະເລ່ຍທີ່ສາມາດເປັນຕົວແທນໃຫ້ແກ່ບັນດາຕອນດິນເຂົ້າໃນຕາຕະລາງອັດຕາຄິດໄລ່ສຳລັບແຕ່ລະເຂດປະເມີນມູນຄ່າທີ່ດິນ ໂດຍແບ່ງບັນດາຕອນດິນອອກເປັນ 4 ລະດັບຕາມປະເພດຂອງຖະໜົນຄື: ຖະໜົນສາຍຫຼັກ,ຖະໜົນສາຍເອກ, ຖະໜົນສາຍເຊື່ອມ ແລະ ຖະໜົນສາຍແຈກ.

- **ຖະໜົນສາຍຫຼັກ**ໝາຍເຖິງການກຳນົດອອກຂອງກົດໝາຍທາງຫຼວງເຊັ່ນ:ຖະໜົນເຊື່ອມຕໍ່ລະຫວ່າງປະເທດ,ເສັ້ນທາງເຊື່ອມຕໍ່ລະຫວ່າງແຂວງຕໍ່ແຂວງ,ເສັ້ນທາງເຊື່ອມຕໍ່ລະຫວ່າງເມືອງຕໍ່ເມືອງ;
- **ຖະໜົນສາຍເອກ** ໝາຍເຖິງຖະໜົນທີ່ເປັນສາຍເອກຂອງແຂວງທີ່ກຳນົດອອກ;
- **ຖະໜົນສາຍເຊື່ອມ** ໝາຍເຖິງຖະໜົນແຍກອອກຈາກຖະໜົນຫຼັກແລະຖະໜົນສາຍເອກ;
- **ຖະໜົນສາຍແຈກ** ໝາຍເຖິງຖະໜົນທາງຮ່ອມ.

8. **ການປະເມີນມູນຄ່າຕາມສູດຄິດໄລ່** ໝາຍເຖິງການຄິດໄລ່ທີ່ກຳນົດໄວ້ ຕາມເຂດປະເມີນທີ່ໄດ້ກຳນົດອອກໃນຂໍ້ຕົກລົງສະບັບນີ້;

9. **ການປະເມີນມູນຄ່າຕາມແບບສະເພາະ** ໝາຍເຖິງກໍລະນີທີ່ໃຊ້ສະເພາະເມືອງທີ່ຍັງບໍ່ທັນມີການປະເມີນລາຄາທີ່ດິນ.

**ມາດຕາ 4. ອົງປະກອບສຳຄັນໃນການປະເມີນມູນຄ່າທີ່ດິນ**

ການປະເມີນມູນຄ່າທີ່ດິນມີ 4 ອົງປະກອບດັ່ງນີ້:

1. ທີ່ຕັ້ງຂອງຕອນດິນ;
2. ພື້ນຖານໂຄງລ່າງ(ສິ່ງອຳນວຍຄວາມສະດວກສຳລັບທີ່ດິນ);
3. ການພັດທະນາທີ່ດິນ(ອີງຕາມການໃຊ້ປະໂຫຍດຕົວຈິງໃນຕອນດິນ);
4. ຄຸນນະພາບຂອງທີ່ດິນ(ອີງຕາມປະເພດການນຳໃຊ້).

**ມາດຕາ 5. ການປະເມີນມູນຄ່າທີ່ດິນ**

ການປະເມີນມູນຄ່າທີ່ດິນ ມີ 2 ວິທີຄື:

1. ຕາມສູດຄິດໄລ່ແມ່ນການຄິດໄລ່ຕາມເຂດປະເມີນ ຫຼືອໜ່ວຍ ( ກັບ/ຕາແມັດ )ກຳນົດໄວ້ຕາມເຂດປະເມີນ ທີ່ໄດ້ກຳນົດອອກຢ່າງເປັນທາງການ;
2. ຕາມແບບສະເພາະແມ່ນການຄິດໄລ່ທີ່ບໍ່ທັນມີເຂດປະເມີນ.

**ມາດຕາ 6. ການຄຸ້ມຄອງລະບົບປະເມີນມູນຄ່າທີ່ດິນ**

ການຄຸ້ມຄອງລະບົບປະເມີນມູນຄ່າທີ່ດິນແມ່ນຕັ້ງຢູ່ບົນພື້ນຖານການເກັບກຳຂໍ້ມູນກ່ຽວກັບລາຄາທີ່ມີການມອບ-ໂອນສິດນຳໃຊ້ທີ່ດິນຕົວຈິງເພື່ອໃຫ້ມີຄວາມຖືກຕ້ອງແລະມີປະສິດທິຜົນໃນການຈັດຕັ້ງປະຕິບັດທຸກໆຄັ້ງທີ່ມີການຍື່ນຄຳຮ້ອງເພື່ອຈົດທະບຽນກ່ຽວກັບທີ່ດິນພະນັກງານປະເມີນມູນຄ່າທີ່ດິນຕ້ອງໄດ້ປະເມີນ ແລະເກັບກຳລາຍລະອຽດກ່ຽວກັບທີ່ດິນເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບລະບຽບກົດໝາຍ.

**ມາດຕາ 7. ຄວາມສຳຄັນຂອງການເກັບກຳຂໍ້ມູນ**

ພະນັກງານປະເມີນມູນຄ່າທີ່ດິນຕ້ອງສັງລວມຂໍ້ມູນຢ່າງຕໍ່ເນື່ອງ ເພື່ອໃຫ້ສາມາດຄາດຄະເນ ແລະຕິດຕາມການເໜັງຕີງຂອງມູນຄ່າທີ່ດິນໃນແຕ່ລະໄລຍະ ເພື່ອການວິເຄາະຂໍ້ມູນກ່ຽວກັບທີ່ດິນຢ່າງລະອຽດ ໂດຍອີງໃສ່ 4 ອົງປະກອບສຳຄັນເປັນພື້ນຖານ.

ທຸກໆຄັ້ງທີ່ພະນັກງານໄດ້ປະເມີນມູນຄ່າທີ່ດິນໃດໜຶ່ງ ຂໍ້ມູນທີ່ກ່ຽວຂ້ອງໃນການປະເມີນມູນຄ່າທີ່ດິນຂອງຕອນດິນນັ້ນ ຈະຖືກບັນທຶກເຂົ້າໃນຖານຂໍ້ມູນລະບົບປະເມີນມູນຄ່າທີ່ດິນ ( ແບບຟອມE ) ເພື່ອເກັບຮັກສາ ແລະ ເປັນພື້ນຖານໃນການຕິດຕາມການເຄື່ອນໄຫວຂອງມູນຄ່າທີ່ດິນໃນຂອບເຂດທີ່ຕອນດິນຕັ້ງຢູ່.

**ມາດຕາ8. ຫຼັກການເຄື່ອນໄຫວ**

ການເຄື່ອນໄຫວວຽກງານປະເມີນມູນຄ່າທີ່ດິນໃນ 4 ເມືອງຄື: ເມືອງປາກເຊ, ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ ແລະ ເມືອງໂພນທອງ ຂອງແຂວງຈຳປາສັກ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ກໍຄືແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ;
2. ສອດຄ່ອງກັບວຽກງານຈົດທະບຽນທີ່ດິນ;
3. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ, ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ມາດຕາ9. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ສະເພາະພາຍໃນ 4 ເມືອງຄື: ເມືອງປາກເຊ, ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ ແລະ ເມືອງໂພນທອງຂອງແຂວງຈຳປາສັກ.

## ໝວດທີ II
## ເຂດການປະເມີນມູນຄ່າທີ່ດິນ ໃນ 4 ເມືອງຂອງແຂວງຈຳປາສັກ

ມາດຕາ 10. ເຂດປະເມີນມູນຄ່າທີ່ດິນເມືອງປາກເຊ

ທີ່ດິນເມືອງປາກເຊ ທີ່ໄດ້ປະເມີນມີ 8 ເຂດ ( A1 – A8) ກວມເອົາ 42 ບ້ານ, ມີ 4 ປະເພດຖະໜົນລະອຽດດັ່ງນີ້:

ຕາຕະລາງລາຍຊື່ບ້ານທີ່ນອນຢູ່ໃນເຂດປະເມີນລາຄາ ຕາມ A

| A1 | A2 | A3 | A4 | A5 |
|---|---|---|---|---|
| 1. ບ້ານ ນາຈຽງ<br>2. ບ້ານແຊ່<br>3. ບ້ານໂພຕາກ<br>4. ບ້ານຊີ້ງ<br>- ຄຸ້ມ ໜອງກຸ້ງ<br>- ຄຸ້ມ ຊີ້ງໃຫ່ຍ | 1. ບ້ານດອນເຂາະ<br>2. ບ້ານຫ້ວຍເລົາ<br>- ຄຸ້ມ ໜອງອີ່ເລີງ<br>3. ບ້ານແກ້ງຊັນ<br>4. ບ້ານດົງເກາະໂລງ<br>5. ບ້ານກົກເດື່ອ<br>- ຄຸ້ມໂນນສີວິໄລ | 1. ບ້ານ ແກ້ງເກິງ<br>2. ບ້ານ ໂພນສີໄຄ<br>3. ບ້ານ ໂພນງາມ | 1. ບ້ານ ຫ້ວຍປຸ່ນ<br>- ຄຸ້ມ ດອນສາມສິບ<br>2. ບ້ານ ສະພານໄຊ<br>- ຄຸ້ມ ຂົວຕະພານ<br>3. ບ້ານ ທ່າໄຮ<br>- ຄຸ້ມ ທ່າເຊໃໝ່<br>- ຄຸ້ມ ທ່າຫີນກາງ<br>- ຄຸ້ມ ປຸ່ງຊຸດົມ<br>4. ບ້ານຄັນເກິງ<br>- ຄຸ້ມທ່າຫີນໃຕ້<br>5. ບ້ານທ່າຫີນເໜືອ | 1. ບ້ານ ທົ່ງ<br>2. ບ້ານ ສາງນ້ຳມັນ<br>- ຄຸ້ມ ສາງວິໄລ<br>3. ບ້ານ ທ່າຫຼວງ<br>4. ບ້ານຫລັກເມືອງ<br>- ຄຸ້ມ ທ່າສາລາຄຳ<br>5. ບ້ານພະບາດ<br>6. ບ້ານ ໂພນໄຊ<br>- ຄຸ້ມໂພນບົກ |

| A6 | A7 | | | A8 |
|---|---|---|---|---|
| 1. ບ້ານປາກເຊ<br>-ຄຸ້ມປາກຫ້ວຍເດື່ອ<br>2. ບ້ານຮ່ອງຂະຍອມ<br>3. ບ້ານໂພນກຸງ<br>4. ບ້ານໂພນສະຫວັນ<br>-ຄຸ້ມ ອຸດົມສະຫວັນ | 1. ບ້ານພັດທະນາ<br>- ຄຸ້ມ ສະຫງວນສັກ<br>2. ບ້ານສະໜາມໄຊ<br>- ຄຸ້ມແກ້ວອຸດົມ<br>- ຄຸ້ມ ທ່າອຸດົມ<br>3. ບ້ານໂພນສະອາດ<br>4. ບ້ານແກ<br>5. ບ້ານແກ້ວສຳພັນ<br>6. ບ້ານໂນນດູ່ | 7. ບ້ານໂຊກອຳນວຍ<br>- ຄຸ້ມສີບຸນເຮືອງ<br>8. ບ້ານນາແຫກ<br>- ຄຸ້ມສ້າງທ່ຽງ<br>9. ບ້ານຫ້ວຍຍາງຄຳ<br>- ຄຸ້ມຫ້ວຍຍາງຄຳເໜືອ<br>- ຄຸ້ມຫ້ວຍຍາງຄຳກາງ<br>- ຄຸ້ມ ຫ້ວຍຍາງຄຳໃຕ້<br>10. ບ້ານກາງ | 11. ບ້ານພູມວ່ງ<br>- ຄຸ້ມ ພູຄູນ<br>12. ບ້ານສວນສະຫວັນ<br>13. ບ້ານຈັດສັນ | 1. ບ້ານໂນນ ສະຫວ່າງ<br>- ຄຸ້ມ ບັງເຢາະ<br>2. ບ້ານດອນໄຫຼ |

ໃ

ຕາຕະລາງຄິດໄລ່ສຳລັບທີ່ດິນເມືອງປາກເຊ ( ກີບ/ຕາແມັດ )

| ເຂດປະເມີນລາຄາ | ປະເພດຖະໜົນ | | | |
|---|---|---|---|---|
| | ຖະໜົນສາຍຫຼັກ | ຖະໜົນສາຍເອກ | ຖະໜົນສາຍເຊື່ອມ | ຖະໜົນສາຍແຈກ |
| A1 | - | 60.000 | 40.000 | 15.000 |
| A2 | 200.000 | 106.000 | 53.000 | 21.200 |
| A3 | 318.000 | 200.000 | 124.000 | 50.000 |
| A4 | 477.000 | 218.000 | 138.000 | 53.000 |
| A5 | 1.229.600 | 858.600 | 636.000 | 125.000 |
| A6 | 1.272.000 | 1.038.800 | 636.000 | 125.000 |
| A7 | 1.229.600 | 1.001.700 | 138.000 | 53.000 |
| A8 | - | 515.000 | 138.000 | 53.000 |

ມາດຕາ 11. ເຂດປະເມີນມູນຄ່າທີ່ດິນ ເມືອງບາຈຽງຈະເລີນສຸກ

ທີ່ດິນເມືອງບາຈຽງຈະເລີນສຸກທີ່ໄດ້ປະເມີນມີ 8 ເຂດ ( C1 – C8 ) ກວມເອົາ 47 ບ້ານ, ມີ 4 ປະເພດຖະໜົນ ລະອຽດດັ່ງນີ້:

ຕາຕະລາງລາຍຊື່ບ້ານທີ່ນອນໃນເຂດປະເມີນລາຄາຕາມ C

| C1 | C2 | C3 | C4 | C5 |
|---|---|---|---|---|
| 1. ບ້ານ ໂພນໄຊ<br>- ຄຸ້ມ ໜອງໝາກເອິກ (ຫຼັກ 14 )<br>- ຄຸ້ມ ໜອງບົວ<br>- ຄຸ້ມ ໂນນສະອາດ<br>2. ບ້ານ ຫຼັກ 16<br>- ຄຸ້ມ ນິຄົມ<br>- ຄຸ້ມຫຼັກ 17<br>3. ບ້ານຫຼັກ 19<br>- ຄຸ້ມ ຫຼັກ 18<br>- ຄຸ້ມຫຼັກ 20<br>4. ບ້ານໜອງກອກ<br>- ຄຸ້ມ ໜອງສິມ<br>-ຄຸ້ມ ສຳນັກ<br>- ຄຸ້ມໂດນ<br>5. ບ້ານຫຼັກ 21 | 1. ບ້ານ ຫຼັກ23<br>- ຄຸ້ມ ຫຼັກ 22<br>2. ບ້ານ ຫຼັກ 25<br>3. ບ້ານ ພົນທອງ<br>- ຄຸ້ມ ຜາສ້ອມ<br>4. ບ້ານ ດົງໄລ່<br>- ຄຸ້ມແກ້ງໄລ່<br>5. ບ້ານອຸດົມສຸກ<br>- ຄຸ້ມ ມ່ວງໄຂ່<br>- ຄຸ້ມ ຫ້ວຍເສີຍ<br>- ຄຸ້ມ ປາກົວະ<br>6. ບ້ານຫ້ວຍພົນ<br>- ຄຸ້ມ ຫ້ວຍຕ້ອງ<br>- ຄຸ້ມເຜຍລາດ | 1. ບ້ານ ໝາກແງວ<br>- ຄຸ້ມໜອງບົກນ້ອຍ<br>2.ບ້ານແກ້ງຍາວ<br>- ຄຸ້ມ ທົ່ງກົມ<br>- ຄຸ້ມ ທົ່ງສາລາ<br>- ຄຸ້ມ ຫ້ວຍມຸດ<br>3.ບ້ານລາດບົກ<br>- ຄຸ້ມໂພນໃຜ່<br>- ຄຸ້ມ ບັກແກງ<br>4.ບ້ານໂນນອຸດົມ<br>- ຄຸ້ມ ຫ້ວຍສົ້ມ<br>5.ບ້ານແກ້ງເກ່ຍ<br>- ຄຸ້ມເຜຍລາດ<br>- ຄຸ້ມ ຫົວຂົວ<br>6.ບ້ານ ປາກຫ້ວຍເດື່ອ<br>7. ບ້ານທົ່ງອຸດົມ<br>8.ບ້ານທີ1/ປາກຊ່ອງ<br>- ຄຸ້ມ ທີ 1/16 | 1. ບ້ານ ກະຈິດ<br>- ຄຸ້ມທົ່ງເພົາ<br>2.ບ້ານໜອງກຸ້ງ<br>- ຄຸ້ມ ສະຫວ່າງ<br>3.ບ້ານໜອງບົວ<br>4.ບ້ານ ຂັນລາຍ<br>5. ບ້ານ ກວາງຊີ<br>6.ບ້ານ ໜອງບົກໃຫຍ່<br>7. ບ້ານ ໜອງກົ້ງ<br>8.ບ້ານໜອງຫົວຄວາຍ<br>9. ບ້ານ ໂນນສອນ<br>10. ບ້ານໜອງໃສ<br>11. ບ້ານ ໂນນໄຊ<br>12. ບ້ານແກ້ງຕື້ນ<br>13. ບ້ານທີ 10<br>- ຄຸ້ມບ້ານທີ 8<br>- ຄຸ້ມບ້ານທີ 9<br>14. ບ້ານທີ 4<br>- ຄຸ້ມບ້ານທີ 6 | 1. ບ້ານເມິ້ງ<br>2.ບ້ານໂພນທອງ<br>3.ບ້ານສອງຄອນ<br>4.ບ້ານທົ່ງທົງ<br>5.ບ້ານປາຫຼາຍ<br>6. ບ້ານ ນາແກ<br>7.ບ້ານພູທອງ |
| **C6** | **C7** | **C8** | | |
| 1.ບ້ານໝື່ນຫຼວງ<br>- ຄຸ້ມຈຽງໄຊ<br>2.ບ້ານໜອງນ້ຳຂາວໃຫຍ່<br>-ຄຸ້ມໜອງນ້ຳຂາວນ້ອຍ<br>- ຄຸ້ມ ຖ້ຳດິນ<br>- ຄຸ້ມ ຄຽງຕັ້ງແລ<br>3.ບ້ານໄຊສະຫວ່າງ<br>- ຄຸ້ມ ທົ່ງສີວິໄລ | 1. ບ້ານ ຫົວແຊ<br>- ຄຸ້ມ ໜອງບົວທອງ<br>- ຄຸ້ມ ຫ້ວຍຍາງ | 1. ບ້ານລິ່ມສັກເໜືອ<br>- ຄຸ້ມ ຫ້ວຍເສັດ<br>- ຄຸ້ມສີວິໄລ(ເສຍອິງຄະ)<br>2. ບ້ານຫ້ວຍລືສີ<br>- ຄຸ້ມ ໂນນຫ້ວຍເດື່ອ<br>3. ບ້ານ ລິ່ມສັກໃຕ້<br>- ຄຸ້ມ ກະໂຍ<br>- ຄຸ້ມ ສະບ່ອງ | | |

ຕາຕະລາງອັດຕາຄິດໄລ່ສຳລັບທີ່ດິນ ເມືອງບາຈຽງຈະເລີນສຸກ ກີບ/ຕາແມັດ

| ເຂດປະເມີນ | ປະເພດຖະໜົນ | | | |
|---|---|---|---|---|
| | ຖະໜົນສາຍຫຼັກ | ຖະໜົນສາຍເອກ | ຖະໜົນສາຍເຊື່ອມ | ຖະໜົນສາຍແຈກ |
| C1 | 8.000 | 5.000 | 2.500 | 700 |
| C2 | 6.500 | 4.500 | 2.000 | 600 |
| C3 | 6.000 | 4.000 | 1.000 | 500 |
| C4 | - | 3.000 | 1.000 | 500 |
| C5 | - | - | 1.000 | 500 |
| C6 | 10.000 | 7.000 | 5.000 | 1.500 |
| C7 | 90.000 | 70.000 | 53.000 | 10.000 |
| C8 | 20.000 | 15.000 | 10.000 | 5.000 |

ມາດຕາ 12. ເຂດປະເມີນມູນຄ່າທີ່ດິນເມືອງປາກຊ່ອງ

ທີ່ດິນເມືອງປາກຊ່ອງທີ່ໄດ້ປະເມີນ ມີ 8 ເຂດ (D1 – D8 ) ກວມເອົາ **88** ບ້ານ, ມີ **4** ປະເພດ ຖະໜົນ ລະອຽດ ດັ່ງນີ້:

ຕາຕະລາງລາຍຊື່ບ້ານທີ່ນອນຢູ່ໃນເຂດປະເມີນລາຄາ ຕາມ D

| D1 | D2 | D3 | D4 |
|---|---|---|---|
| 1. ບ້ານ ປາກຊ່ອງ<br>2. ບ້ານ ວັດຫຼວງ<br>3. ບ້ານ ບັງລຽງ<br>4. ບ້ານ ຫຼັກ 48 | 1. ບ້ານ ຫຼັກ 35<br>2. ບ້ານ ຫ້ວຍກອງ<br>3. ບ້ານ ໜອງອີໂອຍ | 1. ບ້ານ ຫຼັກ 28<br>2. ບ້ານ ຫຼັກ 30<br>3. ບ້ານ ຫຼັກ 33<br>4. ບ້ານ ຫຼັກ 36<br>5. ບ້ານ ຫຼັກ 38<br>6. ບ້ານ ຫຼັກ 40<br>7. ບ້ານ ຫຼັກ 43<br>- ຄຸ້ມ ບ້ານຫຼັກ 42<br>8. ບ້ານ ຫຼັກ 45 | 1. ບ້ານ ຫ້ວຍເສັດ<br>2. ບ້ານ ກະຕອດ<br>3. ບ້ານ ກອງຕຸ່ນ<br>4. ບ້ານ ລີ່ເຈື່ອງ<br>5. ບ້ານ ໜອງສູງ<br>6. ບ້ານ ທົ່ງກະຕ່າຍ<br>7. ບ້ານ ເຊປຽນ<br>8. ບ້ານ ປາກບ້ອງ<br>9. ບ້ານ ພູໂອຍ |

| D5 | D6 | D7 | D8 |
|---|---|---|---|
| 1. ບ້ານໂນນຈັນ | 1. ບ້ານຫ້ວຍຈຽດ | 1. ບ້ານທົ່ງກາຫຼົງ | 1. ບ້ານຫ້ວຍຊ້ອຍ |
| 2. ບ້ານຫຼັກ 11 | 2. ບ້ານ ລີມສະໜຸກ | 2. ບ້ານໜອງເຂືອງນ້ອຍ | ( ກຸ່ມ 7 ) |
| 3. ບ້ານຫຼັກ 12 | 3. ບ້ານໜອງກາ | 3. ບ້ານຫ້ວຍເຕີຍ | 2. ບ້ານຫີນລັບ |
| 4. ບ້ານຫຼັກ 15 | 4. ບ້ານໃໝ່ສີມບູນ | 4. ບ້ານແດນສະຫວ່າງ | 3. ບ້ານຫົວຊ້າງ |
| 5. ບ້ານຈັນສະຫວ່າງ | 5. ບ້ານຫ້ວຍເຕົ່າ | 5. ບ້ານໜອງສຳພັນ | 4. ບ້ານທົ່ງຫວາຍ |
| 6. ບ້ານໜອງເຂືອງ | 6. ບ້ານໜອງບອນ | 6. ບ້ານຫ້ວຍຫວາຍ | 5. ບ້ານໜອງຕວງ |
| 7. ບ້ານນ້ຳປີດ | 7. ບ້ານຜັກກູດນ້ອຍ | (ກຸ່ມ 5) | 6. ບ້ານໜອງເມັກ |
| 8. ບ້ານໜອງກີນ | 8. ບ້ານຄິດໃຫຍ່ | 7. ບ້ານໂນນສູງ | 7. ບ້ານນ້ຳຮຸ່ງ |
| 9.ບ້ານນ້ຳຕາງ | 9. ບ້ານພູດິນອ່ອນ | 8. ບ້ານພູດິນແດງ | 8. ບ້ານໜອງຫີນ |
| 10. ບ້ານໜອງແລະ | 10.ບ້ານກະເພີ | 9. ບ້ານພູຫຼັງແກ່ວ | 9. ບ້ານໜອງເທື່ອມ |
| | 11.ບ້ານພູມອນ | 10. ບ້ານຄິດນ້ອຍ | 10.ບ້ານລາສະສີນ |
| | 12. ບ້ານພູດ້າມຂວານ | 11. ບ້ານຫ້ວຍສາດ | 11. ບ້ານເຊນ້ຳນ້ອຍ |
| | 13. ບ້ານໜອງຫີນຂາວ | 12. ບ້ານພູໜາກກ່ຳ | 12. ບ້ານນ້ຳໂກງ |
| | 14. ບ້ານໜອງກະລີ | 13. ບ້ານໜອງຫຼວງ | 13. ບ້ານຫ້ວຍຊອຍ |
| | 15. ບ້ານເສັດຄິດ | | ( ກຸ່ມ 8 ) |
| | 16. ບ້ານໜອງຢາລຸ່ມ | | 14. ບ້ານຫ້ວຍຫວາຍ |
| | 17. ບ້ານໜອງຢາເທີງ | | ( ກຸ່ມ 8 ) |
| | 18. ບ້ານເຊຕະປຸງ | | 15. ບ້ານຫ້ວຍຈອດ |
| | 19. ບ້ານຫ້ວຍຊັນ | | 16. ບ້ານອຸປະຊາ |
| | | | 17. ບ້ານໜອງພະໜອນ |
| | | | 18. ບ້ານຕາໂອດ |
| | | | 19. ບ້ານຕາເຢີກເສືອ |
| | | | 20. ບ້ານນ້ຳຕອດ |
| | | | 21. ບ້ານພະໜອນດົງ |
| | | | 22. ບ້ານສອນສະຫວ່າງ |

ຕາຕະລາງອັດຕາຄິດໄລ່ສຳລັບທີ່ດິນເມືອງປາກຊ່ອງ ກີບ/ຕາແມັດ

| ເຂດປະເມີນ | ປະເພດຖະໜົນ | | | |
|---|---|---|---|---|
| | ຖະໜົນສາຍຫຼັກ | ຖະໜົນສາຍເອກ | ຖະໜົນສາຍເຊື່ອມ | ຖະໜົນສາຍແຈກ |
| D1 | 150.000 | - | 80.000 | 12.000 |
| D2 | 120.000 | - | 50.000 | 7.000 |
| D3 | 100.000 | - | 35.000 | 6.000 |
| D4 | 80.000 | - | 28.000 | 6.000 |
| D5 | 70.000 | - | 28.000 | 4.000 |
| D6 | - | - | 18.000 | 3.000 |
| D7 | - | - | 15.000 | 3.000 |
| D8 | - | - | 10.000 | 3.000 |

**ມາດຕາ 13. ເຂດປະເມີນມູນຄ່າທີ່ດິນ ເມືອງໂພນທອງ**

ທີ່ດິນເມືອງໂພນທອງ ທີ່ນຳມາປະເມີນ ມີ 8 ເຂດ ( F1 –F8 ) ກວມເອົາ 71 ບ້ານ, ມີ 4 ປະເພດຖະໜົນລະອຽດດັ່ງນີ້:

ຕາຕະລາງຊື່ບ້ານທີ່ນອນໃນເຂດປະເມີນ F

| F1 | F2 | F3 | F4 |
|---|---|---|---|
| 1.ບ້ານໜອງຫອຍ | 1.ບ້ານດອນໄລ່ | 1.ບ້ານດອນຊາດ | 1.ບ້ານນາອຸດົມ |
| 2.ບ້ານສ່າເຫລົ້າ | 2.ບ້ານສະໜໍລຽບ | 2.ບ້ານໃໝ່ສີວິໄລ | 2.ບ້ານທົ່ງກວ້າງ |
| 3.ບ້ານນາຫວ້າ | 3.ບ້ານຫ້ວຍໂດນ | 3.ບ້ານຝັ່ງແດງ | 3.ບ້ານກຸງ |
| 4.ບ້ານຄັນແຍງ | 4.ບ້ານໂນນຫີນ | 4.ບ້ານອຸສຸ | 4.ບ້ານຈີກ |
| 5.ບ້ານຫ້ວຍເຜີກ | 5.ບ້ານອຸປະຫຼາດ | 5.ບ້ານດອນຕະແບງ | 5.ບ້ານໝໍ້ |
| 6.ບ້ານໂພໄຊ | 6.ບ້ານໂພນທອງ | 6.ບ້ານແກ້ງກາງ | 6.ບ້ານໃໝ່ |
| 7.ບ້ານອັດທຳພະແກ້ວ | 7.ບ້ານວັງເຕົ່າ | 7.ບ້ານບົກ | 7.ບ້ານໂພນ |
| 8.ບ້ານທ່າຫຼວງ | 8.ບ້ານແກ | | 8.ບ້ານໜອງແຕ້ |
| 9.ບ້ານໜອງບົວ | 9.ບ້ານດູ່ | | 9.ບ້ານໜອງເມັກ |
| 10.ບ້ານໂນນສະຫວັນ | 10.ບ້ານໜອງໄຮໂຄກ | | 10.ບ້ານນາຈານ |
| | 11.ບ້ານດົງຍາງ | | 11.ບ້ານກ້ອຍ |
| | 12.ບ້ານລາດວາລີ | | 12.ບ້ານພະລີງ |
| | 13.ບ້ານດອນໂຈດ | | |
| | 14.ບ້ານໜອງດົງ | | |

| F5 | F6 | F7 | F8 |
|---|---|---|---|
| 1.ບ້ານໜອງຜື | 1.ບ້ານຊຶ້ງຊາຍ | 1.ບ້ານໂນນພະເຈົ້າ | 1.ບ້ານໂຄກກຸງ |
| 2.ບ້ານອ່າງຄຳ | 2.ບ້ານສະໜົນ | 2.ບ້ານບຸ່ງແກ | 2.ບ້ານຄົນຍາງ |
| 3.ບ້ານສອງຄອນ | 3.ບ້ານສັກເມືອງ | 3.ບ້ານໂນນກຸງ | 3.ບ້ານໂຄກກ່ອງ |
| 4.ບ້ານໂນນສະອາດ | 4.ບ້ານເວີນໄຊ | 4.ບ້ານແກ້ງຍາວ | 4.ບ້ານໂນນຊັບ |
| 5.ບ້ານທ່າໃຫຍ່ | 5.ບ້ານຂະໜາດ | 5.ບ້ານໜອງໄຮທ່າ | 5.ບ້ານໜອງສາລາ |
| | 6.ບ້ານປ້ອງ | 6.ບ້ານໄຜ່ລ້ອມ | |
| | 7.ບ້ານຂຸມທອງ | 7.ບ້ານນາສະຫວ່າງ | |
| | 8.ບ້ານກະຕືນ | | |
| | 9.ບ້ານໂນນຄູນ | | |
| | 10.ບ້ານດອນຈິກ | | |
| | 11.ບ້ານກຸດນ້ຳຂຸ່ນ | | |

## ຕາຕະລາງອັດຕາຄິດໄລ່ສຳລັບທີ່ດິນເມືອງໂພນທອງກົບ/ຕາແມັດ

| ເຂດປະເມີນລາຄາ | ປະເພດຖະໜົນ | | | |
|---|---|---|---|---|
| | ຖະໜົນສາຍຫຼັກ | ຖະໜົນສາຍເອກ | ຖະໜົນສາຍເຊື່ອມ | ຖະໜົນສາຍແຈກ |
| F1 | 150.000 | 100.000 | 50.000 | 5.000 |
| F2 | 130.000 | - | 40.000 | 5.000 |
| F3 | 130.000 | - | 16.000 | 1.600 |
| F4 | - | - | 14.000 | 1.400 |
| F5 | - | - | 12.000 | 1.200 |
| F6 | - | - | 10.000 | 1.000 |
| F7 | - | - | 7.000 | 700 |
| F8 | - | - | 5.000 | 500 |

## ໝວດທີ III

## ອົງການຄຸ້ມຄອງການປະເມີນມູນຄ່າທີ່ດິນໃນ 4 ເມືອງຂອງແຂວງຈຳປາສັກ

### ມາດຕາ 14. ອົງການຄຸ້ມຄອງການປະເມີນມູນຄ່າທີ່ດິນໃນ 4 ເມືອງຂອງແຂວງຈຳປາສັກ

ອົງການຄຸ້ມຄອງການປະເມີນມູນຄ່າທີ່ດິນ ໃນ 4 ເມືອງຂອງແຂວງຈຳປາສັກ ປະກອບມີ:

1. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ;
2. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງປາກເຊ;
3. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງບາຈຽງຈະເລີນສຸກ;
4. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງປາກຊ່ອງ;
5. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງໂພນທອງ.

### ມາດຕາ 15. ສິດ ແລະ ໜ້າທີ່ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຈຳປາສັກ ເປັນໃຈກາງໃນການປະສານວຽກງານປະເມີນລາຄາທີ່ດິນຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດ 4 ເມືອງ ຂອງແຂວງຈຳປາສັກ ຄື: ເມືອງປາກເຊ, ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ ແລະ ເມືອງໂພນທອງ ໂດຍມອບໃຫ້ຂະແໜງຄຸ້ມຄອງທີ່ດິນ ເປັນຜູ້ຮັບຜິດຊອບໂດຍກົງທັງເປັນເຈົ້າການປະສານສົມທົບກັບບັນດາເມືອງ ແລະພາກສ່ວນກ່ຽວຂ້ອງ.

ໃນການຄຸ້ມຄອງວຽກງານປະເມີນມູນຄ່າທີ່ດິນ ພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ນຳເອົາແນວທາງແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ເຊື່ອມຊຶມ, ເຜີຍແຜ່ ເພື່ອນຳໄປຈັດຕັ້ງປະຕິບັດ;

2. ປະກອບບຸກຄະລາກອນເຂົ້າໃສ່ວຽກງານການຄຸ້ມຄອງ ລະບົບການປະເມີນມູນຄ່າທີ່ດິນໃຫ້ພຽງພໍ ໂດຍໃຫ້ສອດຄ່ອງກັບພາລະບົດບາດສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້;

3. ຕິດຕາມ, ກວດກາການປະຕິບັດຂໍ້ຕົກລົງ ວ່າດ້ວຍການປະເມີນມູນຄ່າທີ່ດິນ, ປະສານສົມທົບກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງປາກເຊ, ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ, ເມືອງໂພນທອງ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 16. ສິດ ແລະ ໜ້າທີ່ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 4 ເມືອງ

ໃນການຄຸ້ມຄອງວຽກງານປະເມີນມູນຄ່າທີ່ດິນ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 4 ເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳເອົາແນວທາງແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ທີ່ຕິດພັນກັບວຽກງານການປະເມີນມູນຄ່າທີ່ດິນ ເຊື່ອມຊຶມ, ເຜີຍແຜ່, ແນະນຳໃຫ້ທົ່ວສັງຄົມໄດ້ຮັບຮູ້ເຂົ້າໃຈ ເພື່ອນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບປະສິດທິຜົນສູງ;

2. ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ,ຫ້ອງການທີ່ກ່ຽວຂ້ອງທີ່ຂຶ້ນກັບເມືອງຂອງຕົນ ເພື່ອເກັບກຳຂໍ້ມູນການປ່ຽນແປງ ຂຶ້ນລົງຂອງລາຄາປະກົດຕົວການມອບ-ໂອນສິດນຳໃຊ້ທີ່ດິນໃນຂອບ

ໃ

ເຂດຄວາມຮັບຜິດຊອບຂອງຕົນ, ວາງແຜນກຳນົດອັດຕາຄິດໄລ່ຄືນໃໝ່ເພື່ອນຳສະເໜີຂັ້ນເທິງພິຈາລະນາ ຕາມລະບຽບການທີ່ໄດ້ກຳນົດໄວ້;

3. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 17. ສິດ ແລະ ໜ້າທີ່ຂອງໜ່ວຍງານປະເມີນມູນຄ່າທີ່ດິນ**

ໃນການຄຸ້ມຄອງວຽກງານປະເມີນມູນຄ່າທີ່ດິນ ໜ່ວຍງານປະເມີນມູນຄ່າທີ່ດິນ ຂອງຂະແໜງຄຸ້ມຄອງທີ່ດິນ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ, ຂະແໜງການທີ່ກ່ຽວຂ້ອງ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ,ອຳນາດການປົກຄອງເມືອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມເມືອງ, ເກັບກຳຂໍ້ມູນການປ່ຽນແປງ ຂໍ້ມູນລົງຂອງມູນຄ່າທີ່ດິນໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຝຶກອົບຮົມທາງດ້ານວິຊາການໃຫ້ແກ່ພະນັກງານໜ່ວຍງານປະເມີນລາຄາທີ່ດິນຂອງຕົນແລະຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ;

3. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18. ສິດ ແລະ ໜ້າທີ່ຂອງພະນັກງານປະເມີນມູນຄ່າທີ່ດິນ**

ໃນການຄຸ້ມຄອງວຽກງານປະເມີນມູນຄ່າທີ່ດິນ ພະນັກງານປະເມີນມູນຄ່າທີ່ດິນ ມີສິດ ແລະ ໜ້າທີ່ຕາມການມອບໝາຍດັ່ງນີ້:

1. ເຂົ້າເຖິງສະຖານທີ່ ເພື່ອເກັບກຳຂໍ້ມູນຕາມສະພາບຕົວຈິງ ໃນການມອບ - ໂອນສິດນຳໃຊ້ທີ່ດິນ;

2. ສຳຫຼວດ, ວັດແທກ ແລະ ເກັບກຳຂໍ້ມູນ ທາງດ້ານວິຊາການອື່ນໆ;

3. ຕິດຕາມ, ກວດກາປະເມີນຜົນການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບລະບຽບຫຼັກການ.

## ໝວດທີ IV
## ການຕິດຕາມກວດກາ ແລະ ການເກັບຮັກສາເອກະສານ

**ມາດຕາ 19.ການຕິດຕາມກວດກາພາຍໃນ**

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນຜູ້ຮັບຜິດຊອບຕິດຕາມ, ກວດກາ ປະເມີນຜົນ ແລະ ແກ້ໄຂບັນຫາຕ່າງໆ ກ່ຽວກັບການປະເມີນມູນຄ່າທີ່ດິນ ໂດຍມອບໃຫ້ຂະແໜງການກ່ຽວຂ້ອງເປັນເຈົ້າການ ກ່ຽວກັບການຄິດໄລ່ເກັບຄ່າທຳນຽມຈົດທະບຽນ ມອບ-ໂອນ ສິດນຳໃຊ້ທີ່ດິນໃຫ້ສອດຄ່ອງຕາມເຂດປະເມີນລາຄາ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 20. ການຕິດຕາມກວດກາພາຍນອກ**

ອົງການຕິດຕາມກວດກາພາຍນອກ ປະກອບມີ: ສະພາປະຊາຊົນແຂວງ, ພະແນກກວດກາລັດແຂວງ ແລະ ອົງການໄອຍະການປະຊາຊົນແຂວງ.

ມາດຕາ 21. ການເກັບຮັກສາເອກະສານ

ຫຼັງຈາກພະນັກງານໄດ້ດໍາເນີນການປະເມີນມູນຄ່າທີ່ດິນແລ້ວ ຂະແໜງຄຸ້ມຄອງທີ່ດິນ ຕ້ອງເກັບຮັກສາເອກະສານກ່ຽວກັບຄໍາຮ້ອງຂໍຈົດທະບຽນ, ຂໍ້ມູນພາກສະໜາມ, ການຄິດໄລ່, ບົດລາຍງານຂອງພະນັກງານປະເມີນມູນຄ່າ ແລະ ເອກະສານອື່ນໆ ທີ່ພົວພັນເຖິງການປະເມີນມູນຄ່າທີ່ດິນເຂົ້າໄວ້ຢູ່ໃນລະບົບສໍານວນ.

## ໝວດທີ V
## ການປະຊາສໍາພັນ ແລະ ປະກາດແຈ້ງການ

ມາດຕາ 22. ການປະຊາສໍາພັນ

ຫົວໜ້າພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ດໍາເນີນວຽກງານປະຊາສໍາພັນພາຍໃນແຂວງ ຫຼື ເມືອງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ, ໂດຍສະນາເຜີຍແຜ່ຂັ້ນຕອນເນື້ອໃນຕ່າງໆ ທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງສະບັບນີ້.

ມາດຕາ 23. ການປະກາດແຈ້ງການ

ຫົວໜ້າພະແນກຊັບພະຍາກອນທໍາມະຊາດ ແລະສິ່ງແວດລ້ອມແຂວງ ອອກສໍາເນົາເຂດປະເມີນມູນຄ່າທີ່ດິນ, ຕາຕະລາງຄິດໄລ່, ຕິດປະກາດແຈ້ງການ ຢູ່ຫ້ອງການປົກຄອງບ້ານ, ຫ້ອງການຊັບພະຍາກອນທໍາມະຊາດ ແລະສິ່ງແວດລ້ອມເມືອງ, ແຂວງ ເພື່ອໃຫ້ທົ່ວສັງຄົມຮັບຊາບ.

## ໝວດທີVI
## ຂໍ້ຫ້າມ

ມາດຕາ 24. ຂໍ້ຫ້າມສໍາລັບພະນັກງານປະເມີນມູນຄ່າທີ່ດິນ

ຫ້າມພະນັກງານໃຊ້ສິດ ແລະ ໜ້າທີ່ເກີນຂອບເຂດ, ໃຊ້ຄວາມຮຸນແຮງ, ແອບອ້າງຊື່ຜູ້ອື່ນເພື່ອນາບຂູ່ພະນັກງານ ແລະ ປະຊາຊົນທົ່ວໄປ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດຜົນປະໂຫຍດຂອງປະຊາຊົນ.

ມາດຕາ 25. ຂໍ້ຫ້າມສໍາລັບບຸກຄົນ, ນິຕິບຸກຄົນ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກໍາປົກປິດ, ເຊື່ອງອໍາຄວາມຈິງ, ບໍ່ຈິງໃຈແຈ້ງຂໍ້ມູນ, ໃຊ້ຄວາມຮຸນແຮງ ແລະແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານທີ່ເປັນການລະເມີດລະບຽບກົດໝາຍ.

## ໝວດທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 26. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

### ມາດຕາ 27. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ດຳເນີນຄະດີ ຕາມກໍລະນີໜັກ ຫລື ເບົາ.

ພະນັກງານຜູ້ໃດຜູ້ໜຶ່ງຫາກໄດ້ປະຕິບັດໜ້າທີ່ວຽກງານຂອງຕົນ ໂດຍມີເຈດຕະນາປົກປິດ, ເຊື່ອງອຳຄວາມຈິງ, ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຜົນປະໂຫຍດຂອງຕົນເອງ ຫຼື ຄອບຄົວເພື່ອຝ່າຍໃດຝ່າຍໜຶ່ງຈະຖືກດຳເນີນຄະດີຕາມກົດໝາຍ.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

### ມາດຕາ 28. ການຈັດຕັ້ງປະຕິບັດ

ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

### ມາດຕາ 29. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງສິບຫ້າວັນ ນັບແຕ່ວັນລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ເຈົ້າແຂວງ

ປອ. ບຸນຖອງ ດີວິໄຊ